# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 28 ກັນຍາ 2008 (9-28-2008)

---

## <u>ຈະໃຊ້ມັນຫລືຈະເສັຽມັນ</u>

**ຂໍ້ພຣະຄັມພີໃນບົດຮຽນ**: ມັດທາຍ 25:14-30

### ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ທ່ານຈະໄດ້ຖືກທ້າທາຍໃຫ້ສົ່ງງຕໍ່ການລົງທືນກັບຂອງທັງຫມົດທີ່ພຣະເຈົ້າມອບຫມາຍໃຫ້ທ່ານຄຸ້ມຄອງເພື່ອໃຫ້ເປັນປໂຍດຕໍ່ຣາຊອານາຈັກຂອງພຣະອົງ.

### ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ພຣະເຢຊູກ່າວຄຳອຸປມາເຣື່ອງຂ້າໃຊ້ທີ່ຖືກມອບຫມາຍໃຫ້ຮັກສາຊັບຂອງຜູ້ເປັນນາຍຂນະທີ່ນາຍເດີນທາງໄປທາງໄກ. ຈາກຄຳອຸປມານັ້ນພຣະເຢຊູເນັ້ນຫນັກຕໍ່ພວກທີ່ຕິດຕາມພຣະອົງທີ່ຕ້ອງສັດຊື່ໃນການຄຸ້ມຄອງສິ່ງຂອງທັງຫມົດທີ່ພຣະເຈົ້າໄດ້ມອບຫມາຍໃຫ້ແກ່ພວກເຂົາ.

### ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ພວກທີ່ເຖິງກະສຽນຫລາຍຄົນໃນສມັຍນີ້ເປັນແນວດູດ-ໃນຕົວ. ພວກເຂົາອາດຈະບໍ່ມີພະລັງຫລືບໍ່ມີຄວາມສົນໃຈທີ່ຈະມີສ່ວນຮ່ວມຊ່ວຍເຫລືອຄົນອື່ນໆ. ພວກເຂົາບໍ່ມີເວລາເພາະວ່າພວກເຂົາຫຍຸ້ງນຳກິດທຸຣະສ່ວນຕົວ. ພວກເຂົາບໍ່ມີເງິນເຫລືອຫລັງຈາກທີ່ພວກເຂົາພະຍາຍາມຫາຄວາມພໍໃຈຕໍ່ຄວາມກະຫາຍຂອງພວກເຂົາເອງ. ພວກເຂົາມອງບໍ່ເຫັນສິ່ງທັງຫມົດທີ່ພວກເຂົາມີ-ເວລາ, ພອນສວັນຕ່າງໆ, ຊັບສົມບັດ, ຄວາມພົວ ພັນ, ໂອກາດ-ທີ່ພຣະເຈົ້າປະທານໃຫ້ເພື່ອໃຊ້ໃນການຂຍາຍຣາຊອານາຈັກຂອງພຣະອົງ.

ມີຫນັງເຣື່ອງທີ່ມີຄວາມນິຍົມເຣື່ອງນຶ່ງ, ເປັນເຣື່ອງທີ່ແຕ່ງຂຶ້ນກ່ຽວກັບຊີວິດຂອງຊາຍຫນຸ່ມຄົນນຶ່ງຊຶ່ງມີບັນຫາທາງສຸຂພາບແລະທາງສມອງ. ຕລອດຕົ້ນຈົນສຸດເຣື່ອງ, ຊາຍຫນຸ່ມຄົນນັ້ນພົບວ່າລາວມີຄວາມສາມາດຫລາຍຢ່າງໃນຊີວິດທີ່ລາວເອງກໍບໍ່ຮູ້ຈັກ. ຫລັງຈາກທີ່ໃສ່ຂາປອມທີ່ເຮັດດ້ວຍເຫລັກ, ລາວພົບວ່າຕົວເອງສາມາດແລ່ນໄດ້ຢ່າງວ່ອງໄວ. ລາວຫລິ້ນກິລາຟຸດບໍໃຫ້ທີມມະຫາວິທຍາລັຍອາລາບາມາ, ລາວໄດ້ກາຍເປັນວິຣະບຸຣຸດໃນສົງຄາມວຽດນາມ ແລະກໍໄດ້ຮັບຫລຽນຕຣາຄຳຊອບ: ລາວຫລິ້ນປີງປ່ອງເກັ່ງຫລາຍຈົນມີຄົນເອົາເງິນມາເພື່ອເປັນຜູ້ສນັບສນູນລາວ: ລາວໄດ້ກາຍເປັນນັກແລ່ນທີ່ຄົນທົ່ວທັງປະເທດຮູ້ຈັກດີແລະເປັນຜູ້ບັນຊາຂັບເຮືອຫາກຸ້ງ. ໃນຕອນທ້າຍຂອງຫນັງເຣື່ອງນີ້, ພວກຄົນທັງຫລາຍກໍປະຫລາດໃຈໃນສິ່ງທີ່ຊາຍຫນຸ່ມຄົນນີ້ປະສົບຜົນສຳເຣັດໃນຊີວິດ.

ມີບາງຄົນທີ່ຢູ່ໃນໂບດທີ່ເປັນເຫມືອນຊາຍໜຸມຜູ້ນີ້. ພວກເຂົາບໍ່ເຫັນຄວາມສາມາດໃນຊີວິດຂອງພວກເຂົາຈົນກວ່າພວກເຂົາໄດ້ອະນຸຍາດໃຫ້ພຣະເຈົ້າຊົງໃຊ້ພວກເຂົາກັບຄວາມສາມາດເຫລົ່ານັ້ນ. ແຕ່ວ່າ, ມີຫລາຍໆຄົນບໍ່ເຄີຍມອບຕົວພວກເຂົາເອງໃຫ້ກັບພຣະຜູ້ເປັນເຈົ້າຫລືບໍ່ໄດ້ໃຊ້ພອນສວັນສຳລັບພຣະອົງ. ພວກເຂົາບໍ່ສາມາດເບິ່ງເຫັນທຸກໆສິ່ງທີ່ພວກເຂົາມີ-ເວລາ, ພອນສວັນຕ່າງໆ, ຊັບສົມບັດ, ການພົວພັນ, ໂອກາດ-ທີ່ພຣະເຈົ້າປະທານໃຫ້ເພື່ອໃຊ້ໃນການຂຍາຍຣາຊອານາຈັກຂອງພຣະອົງ.

ໃນການສຶກສາຄຳອຸປມາເຣື່ອງເງິນຕາລັນຕົນ, ພວກເຮົາຖືກທ້າທາຍໃຫ້ເປັນຜູ້ຄຸ້ມຄອງເບິ່ງແຍງທີ່ສັດຊື່ຕໍ່ສິ່ງຂອງທັງຫມົດທີ່ພຣະເຈົ້າໄດ້ປະທານແກ່ພວກເຮົາແລະໃຫ້ສ່ຽງຕໍ່ການລົງທຶນຕໍ່ທຸກໆສິ່ງເພື່ອຜົນປໂຍດສຳລັບຣາຊອານາຈັກຂອງພຣະອົງ.

## <u>ສຶກສາພຣະຄັມພີ</u>

**1. <u>ສິ່ງທີ່ຖືກມອບຫມາຍໃຫ້</u>** (ມັດທາຍ 25:14-18)

ເຈົ້ານາຍຜູ້ນຶ່ງຈະອອກເດີນທາງໄກ ແລະໄດ້ມອບຫມາຍຊັບສົມບັດຂອງລາວໃຫ້ແກ່ຂ້າໃຊ້ຕາມຄວາມສາມາດຂອງພວກເຂົາ. ຄົນທີນຶ່ງໄດ້ຮັບ**ຫ້າຕາລັນຕົນ**, ອີກຄົນນຶ່ງໄດ້ຮັບ**ສອງຕາລັນຕົນ**, ແລະຜູ້ສຸດທ້າຍໄດ້ຮັບ**ນຶ່ງຕາລັນຕົນ**. ນຶ່ງຕາລັນຕົນເປັນເງິນຈຳນວນຫລາຍສົມຄວນ-ມີມູນຄ່າປະມານ 6000 ເດນາຣິອົນ (ນຶ່ງເດນາຣິອົນເທົ່າກັບຄ່າຈ້າງທຳງານຂອງມື້ນຶ່ງ). ແນ່ນອນ ຄຳວ່າຕາລັນຕົນແມ່ນໃຊ້ກ່ຽວກັບເງິນ, ແຕ່ວ່າພວກເຮົາຍັງໃຊ້ເພື່ອເລັງເຖິງພອນສວັນນຳ, ຄວາມສາມາດຕ່າງໆ, ແລະຄວາມສາມາດພິເສດ.

ຂ້າໃຊ້ແຕ່ລະຄົນຖືກມອບຫມາຍໃຫ້ເອົາ**ຕາລັນຕົນ**ຂອງນາຍໄປລົງທຶນ. ຂ້າໃຊ້ສອງຄົນກໍໄດ້ເອົາຕາລັນຕົນຂອງພວກເຂົາ**ໄປລົງທຶນ**ຢ່າງສລາດແລະກໍໄດ້ກຳໄລທົບເຄິ່ງໃຫ້ແກ່ເຈົ້ານາຍຂອງພວກເຂົາ.ແຕ່ວ່າ, ຂ້າໃຊ້ຄົນນຶ່ງກໍ**ໄປຂຸດດິນແລະຝັງເຊື່ອງຊັບຂອງນາຍໄວ້**. ຄຳວ່າ**ທັນທີ**ເລັງເຖິງຄວາມຮີບຮ້ອນຂອງຂ້າໃຊ້ທັງສອງຄົນທີ່ຕ້ອງກະທຳຢ່າງໃດຢ່າງນຶ່ງຂນະທີ່ຍັງມີເວລາເຫລືອກ່ອນທີ່ນາຍຈະກັບມາ. **ສຳ**ລັບຂ້າໃຊ້ຄົນທີສາມບໍ່ມີຄວາມຮີບຮ້ອນຢ່າງໃດເລີຍ.

ພຣະເຈົ້າໄດ້ມອບຫມາຍໃນຕົວມະນຸດແຕ່ລະຄົນດ້ວຍພອນສວັນທີ່ແຕກຕ່າງກັນ. ຄວາມສາມາດຕ່າງໆ, ແລະໂອກາດທັງຫມົດ. ພຣະອົງຮູ້ຈັກວ່າແຕ່ລະຄົນຈະສາມາດເຮັດເຕັມກຳລັງແລະປະທານຕາລັນຕົນໃຫ້ແຕ່ລະຄົນຕາມນັ້ນເພື່ອໃຫ້ສິ່ງທີ່ຖືກມອບຫມາຍໃຫ້ເປັນຕາມພຣະປະສົງຂອງພຣະອົງ. ພຣະເຈົ້າບໍ່ພຽງແຕ່ປະທານຕາລັນຕົນໃຫ້ເປັນຈຳນວນທີ່ແຕກຕ່າງກັນໄປເທົ່ານັ້ນ, ແຕ່ວ່າຍັງປະທານລະຍະເວລາທີ່ແຕກຕ່າງກັນໃຫ້ໃຊ້ຕາລັນຕົນເຫລົ່ານັ້ນອີກດ້ວຍ.

ບັນຫາບໍ່ແມ່ນທີ່ຈຳນວນຕາລັນຕົນທີ່ຖືກມອບໃຫ້, ສຳລັບເຈົ້ານາຍໃນເຣື່ອງນີ້ໄດ້ຍົກຍ້ອງຜູ້ທີ່ໄດ້ສອງຕາລັນຕົນເທົ່າກັບຜູ້ທີ່ໄດ້ຮັບຫ້າຕາລັນຕົນ. ບັນຫານັ້ນແມ່ນການກະທຳຕໍ່ສິ່ງທີ່ຖືກມອບຫມາຍໃຫ້. ໃນກໍຣະນີຂອງຜູ້ທີ່ໄດ້ຮັບນຶ່ງຕາລັນຕົນ, ລາວຖືກປະນາມຕໍ່ການຂາດຄວາມຮັບຜິດຊອບນັ້ນ. ຖ້າຫາກວ່າລາວບໍ່ຢາກສ່ຽງພັຍເໝືອນກັບຄົນອື່ນທີ່ໄດ້ກຳໄລທົບເຄິ່ງນັ້ນ, ລາວຄວນຈະເອົາເງິນໄປຝາກ**ທະນາຄານ**ແລ້ວກໍຈະໄດ້ກຳໄລໃຫ້ນາຍຂອງຕົນ. ເວົ້າສັ້ນໆ, ເຈົ້ານາຍມີຄວາມຫວັງໃຫ້ຂ້າໃຊ້ເຮັດບາງຢ່າງເພີ້ມຕື່ມຕໍ່ຕາລັນຕົນນອກຈາກການເກັບເອົາພວກມັນໄວ້ລ້າໆ. ພວກເຂົາຍັງຕ້ອງໄດ້ໃຊ້ເວລາຢ່າງສລາດຕໍ່ຕາລັນຕົນເຫລົ່ານັ້ນແລະບໍ່ລັ່ງເລຫລືລໍຖ້າຈົນມັນສວາຍເກີນໄປໃນການລົງທຶນ.

ໂດຍການຮັບເອົາຄວາມຈຳເປັນຕໍ່ການສ່ຽງພັຍຂອງການລົງທຶນ, ຂ້າໃຊ້ສອງຄົນນັ້ນບໍ່ພຽງແຕ່ຈະໄດ້ກຳໄລທົບເຄິ່ງເທົ່ານັ້ນ, ພວກເຂົາຍັງໄດ້ຮັບລາງວັນຈາກເຈົ້ານາຍຕໍ່ການກະທຳຂອງພວກເຂົາອີກດ້ວຍ. ເຊັ່ນດຽວກັນ, ສຳລັບພວກທີ່ມີຄວາມເຊື່ອຕ້ອງເຕັມໃຈທີ່ຈະເອົາຄວາມສລາດ, ສັດຊື່ຕໍ່ການສ່ຽງພັຍກັບສິ່ງທີ່ຖືກມອບຫມາຍໃຫ້ພວກເຂົາຈາກພຣະຜູ້ເປັນເຈົ້າໂດຍອະນຸຍາດໃຫ້ພຣະອົງເປີດໂອກາດປະທານໃຫ້ເພີ້ມພູນຂຶ້ນ( 1 ໂກຣິນໂທ 3:6). ຖ້າຫາກທ່ານມີພອນສວັນໃນການສອນ, ທ່ານຄວນຈະສອນ. ທຸກໆຄົນຄວນຈະຮັບໃຊ້ຕາມພອນສວັນທີ່ພຣະເຈົ້າປະທານໃຫ້. ບາງຄົນມີພອນສວັນດ້ານສະຕິປັນຍາໃນຂນະທີ່ຄົນອື່ນໆມີຄວາມສາມາດໃນການທານຝ່າຍດ້ານການເງິນ. ທຸກສິ່ງທຸກຢ່າງທີ່ພຣະເຈົ້າປະທານໃຫ້ຄວນຈະໃຊ້ໃຫ້ເປັນທີ່ຖວາຍກຽດແດ່ພຣະອົງແລະຜົນປໂຍດຂອງພຣະອົງ.

ການລົງທຶນຂອງຊີວິດນຶ່ງຕໍ່ຊີວິດຄົນອື່ນແລະໃນການຮັບໃຊ້ພຣະຜູ້ເປັນເຈົ້າແມ່ນມີການສ່ຽງພັຍຫລາຍ. ເຖິງປານນັ້ນ, ໃນຣາຊອານາຈັກສວັນ, ການລົງທຶນຂອງຊີວິດພວກທີ່ເຊື່ອແລະສິ່ງຂອງຕ່າງໆມີຜົນໃນລາງວັນອັນຕລອດ

ໄປເປັນນິດ. ທຸກໆຄົນທີ່ພວກເຮົານຳມາຫາພຣະຜູ້ເປັນເຈົ້າໂດຍຜ່ານການລົງທຶນຂອງພວກເຮົາເອງແລະສິ່ງຂອງທີ່ພຣະເຈົ້າຂອງພວກເຮົາປະທານໃຫ້ຈະເປັນການເພີ້ມເຕີມຊັບສົມບັດຂອງສວັນ, ສຳລັບພຣະຜູ້ເປັນເຈົ້າວິນຍານທຸກໆດວງມີຄຸນຄ່າຫລາຍ.

## 2. <u>ລາງວັນຂອງຄວາມສັດຊື່</u> (ມັດທາຍ 25:19-23)

ເຈົ້ານາຍໄດ້ອອກເດີນທາງໄປເປັນ**ເວລາດົນນານ**ແຕ່ໄດ້ກັບມາໂດຍດ່ວນເພື່ອ**ຄິດບັນຊີ**ກັບຂ້າໃຊ້ແຕ່ລະຄົນ. ຂ້າໃຊ້ສອງຄົນໄດ້ນຳສິ່ງຂອງຂອງເຈົ້ານາຍທີ່ໄດ້ມອບຫມາຍໃຫ້ພວກເຂົາມາພ້ອມທັງກຳໄລທົບເຄິ່ງ.ແຕ່ລະຄົນໄດ້ຖືກຍົກຍ້ອງແລະໄດ້ຮັບລາງວັນຈາກເຈົ້ານາຍ ໂດຍການໄດ້ຮັບຫນ້າທີ່ຮັບຜິດຊອບທີ່ສຳຄັນກ່ວາເກົ່າແລະມີສ່ວນກັບ**ຄວາມຊົມຊື່ນຍິນດີຂອງເຈົ້ານາຍ**.

ຄຳຍ້ອງຍໍຂອງນາຍທີ່ມີຕໍ່ຂ້າໃຊ້ທີ່ໄດ້ຮັບສອງຕາລັນຕົນ ແມ່ນຄືກັນກັບຜູ້ທີ່ໄດ້ຮັບມອບຫມາຍໃຫ້ຫ້າຕາລັນຕົນ. ລາວໄດ້ຮ້ອງພວກເຂົາວ່າຂ້ອຍໃຊ້**ດີແລະສັດຊື່**. ການມອບລາງວັນຂອງເຈົ້ານາຍບໍ່ໄດ້ຂຶ້ນກັບຈຳນວນທີ່ຂ້າໃຊ້ມີຫລືຈຳນວນທີ່ໄດ້ເພີ້ມ, ແຕ່ວ່າມັນຂຶ້ນກັບນິສັຍແລະການທີ່ຂ້າໃຊ້ແຕ່ລະຄົນໄດ້ເຮັດຕໍ່ສິ່ງທີ່ຖືກມອບຫມາຍໃຫ້ເທົ່ານັ້ນ.

ຜູ້ທີ່ເຊື່ອແຕ່ລະຄົນສາມາດຮັບຄຳຫນູນໃຈແລະທ້າທາຍຕໍ່ຄວາມຈິງທີ່ວ່າ ເຈົ້ານາຍຂອງພວກເຮົາວາງໃຈໃນພວກເຮົາບໍ່ໄດ້ຂຶ້ນກັບຈຳນວນທີ່ພວກເຮົາເລີ້ມຕົ້ນຫລືຈຳນວນຕອນຈົບລົງ, ແຕ່ຂຶ້ນກັບສິ່ງທີ່ພວກເຮົາເຮັດຕໍ່ສິ່ງທີ່ພວກເຮົາມີ. ໂລກນີ້ສັຣເສີນຄົນທີ່ມີວັດຖຸສິ່ງຂອງຫລາຍ, ແຕ່ວ່າພຣະເຈົ້າສວມພວງມາລັຍແກ່ຜູ້ດູແລຮັກສາທີ່ສັດຊື່.

ອັຄສາວົກໂປໂລໄດ້ເຕືອນພວກທີ່ເຊື່ອເຖິງຄວາມສຳຄັນຂອງການເປັນຜູ້ສັດຊື່ເນື່ອງຈາກວ່າໄດ້ເປັນ "ຜູ້ຮ່ວມ-ງານ" ກັບພຣະເຈົ້າດັ່ງນັ້ນຕ້ອງເກັບຮັກສາລາງວັນໄວ້ໃນວັນແຫ່ງການພິພາກສາຂອງພຣະຄຣິດ (1 ໂກຣິນໂທ 3:8-15). ພຣະເຢຊູໄດ້ບອກພວກທີ່ເຊື່ອວ່າພຣະອົງຈະສະເດັດກັບມາຢ່າງວ່ອງໄວແລະພຣະອົງຈະປະທານລາງວັນໃຫ້ແກ່ແຕ່ລະຄົນ ສຸດແລ້ວແຕ່ການກະທຳຂອງພວກເຂົາ (ພຣະນິມິດ 22:12).

ມີທາງດຽວເທົ່ານັ້ນທີ່ຈະເພີ້ມພູນສິ່ງທີ່ພຣະເຈົ້າມອບຫມາຍໃຫ້ແກ່ທຸກໆຄົນຄືໃຫ້ໃຊ້ສຳລັບພຣະອົງຢ່າງສັດຊື່ແລະໃຊ້ຢ່າງຖືກຕ້ອງ. ພວກທີ່ເຊື່ອຕ້ອງສ່ຽງຕໍ່ຄວາມເຊື່ອແລະເອົາພອນສວັນຂອງພວກເຂົາໃຊ້ສຳລັບພຣະອົງແລະອະນຸຍາດໃຫ້ພຣະຜູ້ເປັນເຈົ້າເພີ້ມເຕີມສິ່ງທີ່ເປັນຂອງພຣະອົງໃຫ້ເພີ້ມຂຶ້ນຫລາຍເທົ່າຕົວ ສຳລັບພຣະກຽດຂອງພຣະອົງເອງ.

## 3. <u>ສວຍໃຊ້ໂອກາດຢ່າງບໍ່ເສັຽດາຍ</u> (ມັດທາຍ 25:24-30)

ຂ້າໃຊ້ທີ່ໄດ້ຮັບຕາລັນຕົນດຽວກໍເຂົ້າມາພົບນາຍຂອງລາວ ແລະກໍເລີ້ມກ່າວຄຳແກ້ຕົວເພື່ອປົກບັງການບໍ່ສັດຊື່ຂອງລາວ. ລາວອ້າງວ່າລາວ**ຮູ້ຈັກ**ເຈົ້ານາຍ, ໂດຍເອີ້ນເຈົ້ານາຍຜູ້ນັ້ນວ່າເປັນ**ຄົນໃຈແຂງ**ແລະກ່າວຫາວ່າ**ເກັບກ່ຽວ**ແລະ**ຮິບໂຮມ**ເອົາຈາກຜົນງານຂອງຄົນອື່ນໆ. ລາວຍັງຮັບຮູ້ເຖິງການເປັນເຈົ້າຂອງເງິນຕາລັນຕົນຂອງເຈົ້ານາຍ, ໂດຍເວົ້າວ່າ**ເງິນຕາລັນຕົນຂອງທ່ານ**. ລາວຍັງກ່າວອ້າງໄປຕື່ມອີກວ່າລາວ**ຢ້ານ**ແລະເອົາເງິນຕາລັນຕົນໄປ**ເຊື່ອງ**ໄວ້ໃນດິນ. ລາວນຳເງິນຕາລັນຕົນມາສົ່ງເຈົ້ານາຍແລະກ່າວວ່າ, "ນີ້ແຫລະ, ສິ່ງທີ່ເປັນຂອງທ່ານກໍໄດ້ແລ້ວ." ເຫັນແຈ້ງແລ້ວວ່າ, ໃນລະຍະທີ່ລາວໄດ້ຮູ້ຈັກກ່ຽວກັບເຈົ້ານາຍຜູ້ນັ້ນ, ລາວຍັງບໍ່ໄດ້ຮູ້ຈັກນາຍຜູ້ນັ້ນດີປານໃດ.

ເຈົ້ານາຍໄດ້ຮ້ອງຂ້າໃຊ້ຜູ້ນັ້ນວ່າຊົ່ວແລະຂີ້ຄ້ານ. ຄຳເວົ້າທີ່ພຣະເຢຊູໄດ້ໃຊ້ຕໍ່ຂ້າໃຊ້ຜູ້ທີ່ສາມໄດ້ເປີດເຜີຍໃຫ້ເຫັນວ່າລາວບໍ່ມີນິສັຍຄືກັນກັບສອງຄົນນັ້ນແລະມັນບໍ່ພຽງແຕ່ການປະພຶດເທົ່ານັ້ນ, ແຕ່ແມ່ນນິສັຍທີ່ເປັນບັນຫາ. ເຈົ້ານາຍໄດ້ບອກຂ້າໃຊ້ຖ້າວ່າລາວຫາກຮູ້ຈັກເຖິງຄວາມຄາດຫມາຍທີ່ນາຍຕ້ອງການໃຫ້ເຮັດຢ່າງໃດຢ່າງນຶ່ງກ່ຽວກັບເງິນຕາລັນຕົນ, ຢ່າງນ້ອຍທີ່ສຸດລາວຄວນຈະເອົາເງິນໄປຝາກທະນາຄານແລະກໍຈະໄດ້ດອກເບັ້ຽ. ຄວາມຄາດຫວັງຂອງເຈົ້ານາຍກໍຢາກເຫັນຂ້າໃຊ້ເຮັດຢ່າງໃດຢ່າງນຶ່ງໃຫ້ເກີດຜົນດີຕໍ່ເງິນຕາລັນຕົນນັ້ນ. ເຈົ້ານາຍໄດ້ເອົາເງິນຕາລັນຕົນໄປ

ຈາກຂ້າໃຊ້ຊົ່ວແລະຂີ້ຄ້ານແລະເອົາມອບໃຫ້ແກ່ຜູ້ທີ່ມີ 10 ຕາລັນຕົນ. ເຈົ້ານາຍຜູ້ນັ້ນບໍ່ມີໂອກາດໃຫ້ອີກເປັນເທື່ອທີສອງ. ໂອກາດທີ່ຈະໃຊ້ເງິນຕາລັນຕົນເພື່ອເຈົ້ານາຍໄດ້ສູນເສັຽໄປແລ້ວແລະສິ່ງທີ່ເຫລືອຢູ່ກໍຄືການພິພາກສາເທົ່ານັ້ນ.

ເຈົ້ານາຍ(ພຣະເຢຊູ)ໄດ້ກ່າວເຖິງຫລັກການແຫ່ງຣາຊອານາຈັກວ່າ. ພວກທີ່ໃຊ້ໃນສິ່ງທີ່ພວກເຂົາມີຢ່າງສັດຊື່-ຊີວິດຂອງພວກເຂົາ, ພອນສວັນຕ່າງໆ-ຈະຊົງໂຜດປະທານໃຫ້ພວກເຂົາຫລາຍເກີນຄວາມພຽງພໍ. ພວກທີ່ບໍ່ມອບຊີວິດຂອງພວກເຂົາໃຫ້ແກ່ອົງພຣະຜູ້ເປັນເຈົ້າ ແລະບໍ່ໃຊ້ພອນສວັນຂອງພວກເຂົາໃຫ້ເກີດຜົນເພີ້ມຂຶ້ນເພື່ອພຣະຜູ້ເປັນເຈົ້າຈະສູນເສັຽແມ້ກະທັ້ງຊີວິດທີ່ພວກເຂົາມີຢູ່ນັ້ນ.

ເຈົ້ານາຍຜູ້ນັ້ນບໍ່ພຽງແຕ່ໄດ້ເອົາເງິນຕາລັນຕົນໄປຈາກຂ້າໃຊ້ເທົ່ານັ້ນ, ແຕ່ຍັງໄດ້ຖິ້ມຂ້າໃຊ້ຊົ່ວໄປບ່ອນມືດພາຍນອກບ່ອນນັ້ນຈະມີການຮ້ອງໄຫ້ແລະຂົບແຂ້ວຢູ່. ປໂຍກນີ້ພັນລະນາເຖິງການຖືກແຍກຄັ້ງສຸດທ້າຍລະຫວ່າງພວກທີ່ມີຄວາມສຳພັນທີ່ຖືກຕ້ອງກັບພຣະເຈົ້າແລະພວກທີ່ບໍ່ມີຄວາມສຳພັນກັບພຣະອົງ.

ຄືກັນກັບຂ້າໃຊ້ໃນເຣື່ອງນີ້, ມະນຸດທຸກຄົນຈະຕ້ອງໃຫ້ການກ່ຽວເຣື່ອງຊີວິດຂອງພວກເຂົາຕໍ່ພຣະຜູ້ເປັນເຈົ້າ ແລະກໍຈະຖືກພິພາກສາຕາມການໂຕ້ຕອບຕໍ່ການອະພັຍໂທດຂອງພຣະເຈົ້າແລະຕໍ່ການເຊື້ອເຊີນຂອງໃຫ້ເຂົ້າໃນຣາຊອານາຈັກຂອງພຣະອົງ. ພວກທີ່ໄດ້ຖືກຮັບມອບຫມາຍພອນສວັນຫລາຍຢ່າງ, ໂອກາດຕ່າງໆ, ແລະວັດຖຸສິ່ງຂອງທຸກຢ່າງຈະໄດ້ໃຫ້ລາຍງານຕໍ່ພຣະເຈົ້າວ່າພວກເຂົາໄດ້ໃຊ້ສິ່ງເຫລົ່ານັ້ນຢ່າງໃດເພື່ອປໂຍດຂອງຣາຊອານາຈັກພຣະອົງ.

## ບົດຮຽນຊີວິດ

ພວກເຮົາບໍ່ຄວນຈະເປັນເຫມືອນຂ້າໃຊ້ທີ່ໄດ້ຮັບນຶ່ງຕາລັນຕົນ ແລະບໍ່ເປັນຄົນຢ້ານຕໍ່ພຣະພັກພຣະຜູ້ເປັນເຈົ້າຕໍ່ການຫລົ້ມເຫລວຂອງພວກເຮົາ. ແທນທີ່ຈະເປັນດັ່ງນັ້ນ, ພວກເຮົາຄວາມມີຄວາມສຳພັນສ່ວນຕົວກັບພຣະຜູ້ເປັນເຈົ້າທີ່ຈະອະນຸຍາດໃຫ້ພວກເຮົາເຊື່ອຟັງພຣະອົງໃນຄວາມເຊື່ອ ແລະໃຊ້ທຸກຢ່າງທີ່ພຣະເຈົ້າໄດ້ມອບຫມາຍໃຫ້ພວກເຮົາທີ່ຈະຂຍາຍຣາຊອານາຈັກຂອງພຣະອົງ. ມີທາງດຽວນີ້ແຫລະທີ່ພວກເຮົາຈະສາມາດໄດ້ຍິນພຣະເຢຊູກ່າວ **"ດີແລ້ວ, ຂ້ອຍໃຊ້ຜູ້ດີແລະສັດຊື່ເອີຍ"** (ມທ 25:21).

ພວກເຮົາຈະເປັນຂ້ອຍໃຊ້ທີ່ດີແລະສັດຊື່ໄດ້ຢ່າງໃດ?

- ໃຫ້ຮູ້ຈັກວ່າທຸກສິ່ງທຸກຢ່າງທີ່ພວກເຮົາມີແມ່ນໄດ້ຖືກມອບຫມາຍໂດຍພຣະເຈົ້າສຳລັບໃຊ້ແລະເພີ້ມຂຍາຍຣາຊອານາຈັກເພື່ອພຣະອົງ.
- ຈຳເປັນຕ້ອງສ່ຽງພັຍໃນການໃຊ້ພອນສວັນຕ່າງໆເພື່ອພຣະອົງ.
- ວາງໃຈໃນພຣະເຈົ້າທີ່ຈະອວຍພອນໃຫ້ພວກເຮົາໄດ້ເພີ້ມຫລາຍຂຶ້ນໃນການລົງທຶນໃນຣາຊອານາຈັກຂອງພຣະອົງ.
- ຕ້ອງໃຫ້ແນ່ນອນວ່າພວກເຮົາມີຄວາມສຳພັນກັບພຣະເຈົ້າໂດຍຄວາມເຊື່ອໃນພຣະເຢຊູຄຣິດ.
- ຈົ່ງຈຳໄວ້ວ່າມື້ນຶ່ງພວກເຮົາຈະໄດ້ໃຫ້ການຕໍ່ພຣະເຈົ້າສຳລັບຊີວິດຂອງພວກເຮົາ-ທຸກໆສິ່ງທີ່ພວກເຮົາມີແລະທຸກໆຢ່າງທີ່ພວກເຮົາໄດ້ກະທຳ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA